ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 091 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍອາກອນທີ່ດິນ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 85/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາກອນທີ່ດິນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ, ລົງວັນທີ 15 ສິງຫາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍອາກອນທີ່ດິນ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 85 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາກອນທີ່ດິນ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອາກອນທີ່ດິນ ໃນວາລະຂອງກອງປະຊຸມຄັ້ງວັນທີ 6 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 17 ກໍລະກົດ 2023.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອາກອນທີ່ດິນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ　　　　　　　　　　　　　　　　　　　　　　　　ເລກທີ 35 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍອາກອນທີ່ດິນ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານອາກອນທີ່ດິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ, ຍຸຕິທຳ ແລະ ໂປ່ງໃສ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ອາກອນທີ່ດິນ

ອາກອນທີ່ດິນ ແມ່ນ ພັນທະເປັນເງິນທີ່ເກັບຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນ ເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທີ່ດິນ** ໝາຍເຖິງ ເນື້ອທີ່ຕອນດິນ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ;

2. **ຜູ້ເສຍອາກອນທີ່ດິນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນ ເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ;

3. **ຜູ້ມອບອາກອນທີ່ດິນ** ໝາຍເຖິງ ໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ;

4. **ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການມອບສິດຈາກສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ໃຫ້ເກັບອາກອນທີ່ດິນ;

5. **ທີ່ດິນກະສິກຳ** ໝາຍເຖິງ ທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການ ປູກຝັງ, ລ້ຽງສັດ, ປະມົງ, ຊົນລະປະທານ ແລະ ການຄົ້ນຄວ້າທົດລອງດ້ານກະສິກຳ;

6. **ທີ່ດິນປຸກສ້າງ** ໝາຍເຖິງ ທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ໃນການພັດທະນາເປັນຕົວເມືອງໃໝ່, ປຸກສ້າງທີ່ຢູ່ອາໄສ, ສຳນັກງານ, ອົງການ, ສະຖານທີ່ສາທາລະນະ, ການຄ້າ, ການບໍລິການ ແລະ ສິ່ງປຸກສ້າງອື່ນ ຕາມເຂດຈັດສັນ ແລະ ສອດຄ່ອງກັບແຜນຜັງຕົວເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. **ທີ່ດິນເປົ່າວ່າງ** ໝາຍເຖິງ ທີ່ດິນກະສິກຳ ຫຼື ທີ່ດິນປຸກສ້າງ ທີ່ບໍ່ໄດ້ ພັດທະນາ ຫຼື ກໍ່ສ້າງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ;

8. **ໃບຕາດິນ** ໝາຍເຖິງ ເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດນຳໃຊ້ທີ່ດິນ ຊຶ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກໃບທະບຽນທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງພຽງໃບດຽວ ນຳໃຊ້ເປັນຫຼັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍ;

9. **ໃບຢັ້ງຢືນການນຳໃຊ້ທີ່ດິນ** ໝາຍເຖິງ ເອກະສານທີ່ຢັ້ງຢືນສິດນຳໃຊ້ທີ່ດິນ ຊຶ່ງອົງການທີ່ກ່ຽວຂ້ອງຂອງລັດ ອອກໃຫ້ພົນລະເມືອງລາວ ຕາມນະໂຍບາຍຈັດສັນ ເພື່ອເປັນບ່ອນທີ່ຢູ່ອາໄສ ແລະ ທຳການຜະລິດ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານອາກອນທີ່ດິນ

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຄຸ້ມຄອງວຽກງານອາກອນທີ່ດິນ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ໂຄງລ່າງພື້ນຖານ, ພາຫະນະ ແລະ ອຸປະກອນຮັບໃຊ້, ພັດທະນາລະບົບການເສຍ, ການມອບ ແລະ ການຈັດເກັບອາກອນທີ່ດິນ ໃຫ້ມີຄວາມສະດວກ ທັນສະໄໝ, ວ່ອງໄວ ແລະ ຖືກຕ້ອງ ໂດຍສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ລັດ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ ໃນການເສຍອາກອນທີ່ດິນ ເປັນຕົ້ນ ແນະນຳທາງດ້ານວິຊາການ, ເຜີຍແຜ່ ແລະ ໃຫ້ເຂົ້າເຖິງ ກົດໝາຍ ແລະ ລະບຽບການ ກ່ຽວກັບສ່ວຍສາອາກອນ, ນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການເສຍ ແລະ ມອບອາກອນທີ່ດິນ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານອາກອນທີ່ດິນ

ການເຄື່ອນໄຫວວຽກງານອາກອນທີ່ດິນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ຢ່າງລວມສູນ, ທັນສະໄໝ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ມີຄວາມຍຸຕິທຳ, ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້;
4. ອຳນວຍຄວາມສະດວກ ໃຫ້ຜູ້ເສຍອາກອນທີ່ດິນ ຢ່າງສະເໝີພາບຕາມກົດໝາຍ;
5. ຮັບປະກັນການປະສານສົມທົບ ແລະ ການມີສ່ວນຮ່ວມ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນ.

### ມາດຕາ 6 ພັນທະອາກອນທີ່ດິນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນ ເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ ລ້ວນແຕ່ມີພັນທະເສຍອາກອນທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານອາກອນທີ່ດິນ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນທີ່ດິນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ພັດທະນາຊັບພະຍາກອນມະນຸດ ແລະ ດ້ານອື່ນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ການເກັບ ແລະ ການຄິດໄລ່ ອາກອນທີ່ດິນ
### ໝວດທີ 1
### ການເກັບອາກອນທີ່ດິນ

**ມາດຕາ 9 ການເກັບອາກອນທີ່ດິນ**

ການເກັບອາກອນທີ່ດິນ ແມ່ນ ການເກັບພັນທະເປັນເງິນໃນການນຳໃຊ້ທີ່ດິນປະຈຳປີຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນ ເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 10 ປະເພດທີ່ດິນທີ່ຖືກເສຍອາກອນທີ່ດິນ**

ທີ່ດິນທີ່ຖືກເສຍອາກອນ ມີ ສອງປະເພດ ດັ່ງນີ້:

1. ທີ່ດິນກະສິກຳ;
2. ທີ່ດິນປຸກສ້າງ.

ສຳລັບທີ່ດິນກະສິກຳ, ທີ່ດິນປຸກສ້າງ ຊຶ່ງເປັນທີ່ດິນເປົ່າວ່າງ ແລະ ທີ່ດິນຂອງລັດທີ່ໃຫ້ເຊົ່າ ຫຼື ສຳປະທານ ກໍຕ້ອງຖືກເສຍອາກອນທີ່ດິນເຊັ່ນກັນ.

**ມາດຕາ 11 ທີ່ດິນທີ່ຖືກຍົກເວັ້ນອາກອນທີ່ດິນ**

ທີ່ດິນທີ່ຖືກຍົກເວັ້ນອາກອນທີ່ດິນ ມີ ດັ່ງນີ້:

1. ທີ່ດິນກະສິກຳ:

- ທີ່ດິນກະສິກຳ ສຳລັບການຄົ້ນຄວ້າທົດລອງດ້ານກະສິກຳຂອງລັດ;
- ທີ່ດິນກະສິກຳ ຂອງຄອບຄົວທຸກຍາກ ທີ່ໄດ້ຮັບການຢັ້ງຢືນຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງອົງການປົກຄອງບ້ານທີ່ກ່ຽວຂ້ອງ;
- ທີ່ດິນກະສິກຳທີ່ໄດ້ຮັບຄວາມເສຍຫາຍ ຈາກໄພພິບັດທຳມະຊາດ ຈະໄດ້ຮັບການຍົກເວັ້ນໃນປີທີ່ຖືກໄພພິບັດ ຫຼື ໄລຍະຟື້ນຟູ ຕາມການຢັ້ງຢືນຈາກ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ;
- ທີ່ດິນກະສິກຳຂອງຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ ຊຶ່ງໄດ້ຮັບການຈັດສັນພູມລຳເນົາໃໝ່ ໃນໄລຍະເວລາ ສາມປີ ນັບແຕ່ວັນຍົກຍ້າຍເປັນຕົ້ນໄປ;
- ທີ່ດິນກະສິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

2. ທີ່ດິນປຸກສ້າງ:

- ທີ່ດິນປຸກສ້າງ ເພື່ອສາທາລະນະປະໂຫຍດ ເປັນຕົ້ນ ສວນສາທາລະນະ, ສາສະນະສະຖານ, ປ່າຊ້າ, ປ່າສັກສິດ;

- ທີ່ດິນປຸກສ້າງຂອງລັດ ເພື່ອນຳໃຊ້ເປັນ ສະຖານທີ່ເກັບຂີ້ເຫຍື້ອ, ສະຖານີນ້ຳປະປາ, ສະຖານການສຶກສາ, ສະໜາມກິລາ, ໂຮງໝໍ ແລະ ສະໜາມເດັກຫຼິ້ນ;

- ທີ່ດິນປຸກສ້າງທີ່ລັດມອບສິດໃຫ້ ອົງການຈັດຕັ້ງສາກົນ, ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ທີ່ປະຈຳຢູ່ ສປປ ລາວ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

- ທີ່ດິນປຸກສ້າງທີ່ຢູ່ອາໄສ ຂອງຄອບຄົວທຸກຍາກ ທີ່ໄດ້ຮັບການຢັ້ງຢືນຈາກ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງອົງການປົກຄອງບ້ານທີ່ກ່ຽວຂ້ອງ;

- ທີ່ດິນປຸກສ້າງທີ່ໄດ້ຮັບຄວາມເສຍຫາຍ ຈາກໄພພິບັດທຳມະຊາດ ຈະໄດ້ຮັບການຍົກເວັ້ນໃນປີທີ່ຖືກໄພພິບັດ ຫຼື ໄລຍະຟື້ນຟູ ຕາມການຢັ້ງຢືນຈາກ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ;

- ທີ່ດິນປຸກສ້າງຂອງຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ ຊຶ່ງໄດ້ຮັບການຈັດສັນພູມລຳເນົາໃໝ່ ໃນໄລຍະເວລາ ສາມປີ ນັບແຕ່ວັນຍົກຍ້າຍເປັນຕົ້ນໄປ;

- ທີ່ດິນປຸກສ້າງອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 2
## ການຄິດໄລ່ອາກອນທີ່ດິນ

### ມາດຕາ 12 ການຄິດໄລ່ອາກອນທີ່ດິນ

ການຄິດໄລ່ອາກອນທີ່ດິນ ແມ່ນ ໃຫ້ເອົາພື້ນຖານການຄິດໄລ່ອາກອນທີ່ດິນ ຄູນກັບອັດຕາອາກອນທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 13 ພື້ນຖານການຄິດໄລ່ອາກອນທີ່ດິນ

ພື້ນຖານການຄິດໄລ່ອາກອນທີ່ດິນ ແມ່ນ ໃຫ້ເອົາເນື້ອທີ່ຂອງຕອນດິນເປັນຕາແມັດ ຄູນກັບລາຄາຕາມການປະເມີນລາຄາທີ່ດິນໃນແຕ່ລະເຂດທີ່ກຳນົດໃນຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ ໃນແຕ່ລະໄລຍະ.

### ມາດຕາ 14 ອັດຕາອາກອນທີ່ດິນ

ອັດຕາອາກອນທີ່ດິນ ມີ ດັ່ງນີ້:

| ລ/ດ | ປະເພດ | ປີ 2024-2026 ເປັນສ່ວນຮ້ອຍ (%) | ປີ 2027-2029 ເປັນສ່ວນຮ້ອຍ (%) | ເລີ່ມປີ 2030 ເປັນສ່ວນຮ້ອຍ (%) |
|---|---|---|---|---|
| 1 | **ທີ່ດິນກະສິກຳ** | 0,01 | 0,02 | 0,03 |
| | **ທີ່ດິນກະສິກຳເປົ່າວ່າງ** | 0,02 | 0,03 | 0,04 |
| 2 | **ທີ່ດິນປຸກສ້າງ** | | | |
| | - ທີ່ດິນປຸກສ້າງທີ່ຢູ່ອາໄສ | 0,02 | 0,03 | 0,04 |
| | - ທີ່ດິນປຸກສ້າງ ໂຮງງານອຸດສາຫະກຳ, ການຄ້າ ແລະ ບໍລິການ | 0,03 | 0,04 | 0,05 |
| | - ທີ່ດິນປຸກສ້າງເປົ່າວ່າງ | 0,04 | 0,05 | 0,06 |

# ພາກທີ III
# ວິທີເກັບ, ການເສຍ, ການມອບ ແລະ ການສົ່ງຄືນ ອາກອນທີ່ດິນ

**ມາດຕາ 15 ວິທີເກັບອາກອນທີ່ດິນ**

ວິທີເກັບອາກອນທີ່ດິນ ໃຫ້ຈັດເກັບຕາມປະເພດທີ່ດິນທີ່ໄດ້ກຳນົດໄວ້ໃນໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ.

ໃນກໍລະນີການນຳໃຊ້ທີ່ດິນຕອນໜຶ່ງໃນຫຼາຍເປົ້າໝາຍ ໃຫ້ປະຕິບັດຕາມລະບຽບການຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອແຍກເປົ້າໝາຍການນຳໃຊ້ທີ່ດິນ ແລະ ອອກເອກະສານຢັ້ງຢືນໃຫ້ສອດຄ່ອງກັບຕົວຈິງ.

**ມາດຕາ 16 ການເສຍອາກອນທີ່ດິນ**

ເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ ຕ້ອງເສຍອາກອນທີ່ດິນປະຈຳປີ ເປັນສະກຸນເງິນກີບ ນັບແຕ່ວັນທີ 1 ມັງກອນ ຫາ 31 ທັນວາ ຂອງທຸກປີ ໂດຍເສຍຜ່ານລະບົບທະນາຄານ, ຄັງເງິນແຫ່ງຊາດ, ໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ.

**ມາດຕາ 17 ການມອບອາກອນທີ່ດິນ**

ໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ ຕ້ອງມອບເງິນອາກອນທີ່ດິນ ທີ່ຈັດເກັບໄດ້ ເຂົ້າບັນຊີລວມສູນຄັງເງິນແຫ່ງຊາດ ຢູ່ທະນາຄານທຸລະກິດ, ຄັງເງິນແຫ່ງຊາດ ຫຼື ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ບ່ອນທີ່ຂຶ້ນກັບ ພາຍໃນວັນຈັດເກັບ. ໃນກໍລະນີບ້ານທີ່ຢູ່ຫ່າງໄກສອກຫຼີກ ໃຫ້ມອບອາກອນທີ່ດິນ ທີ່ເກັບໄດ້ພາຍໃນອາທິດສຸດທ້າຍຂອງທຸກເດືອນ.

**ມາດຕາ 18 ການສົ່ງຄືນອາກອນທີ່ດິນ**

ການສົ່ງຄືນອາກອນທີ່ດິນ ແມ່ນ ການສົ່ງເງິນອາກອນທີ່ດິນໃຫ້ຜູ້ເສຍອາກອນ ທີ່ໄດ້ມອບອາກອນເກີນຈຳນວນທີ່ກົດໝາຍກຳນົດ ຫຼື ຕາມທີ່ກົດໝາຍກຳນົດໄວ້.

ການສົ່ງຄືນອາກອນທີ່ດິນ ເກີດຂຶ້ນໃນກໍລະນີມີການຄິດໄລ່ອາກອນຜິດພາດ ຍ້ອນການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຂອງຜູ້ເສຍອາກອນ ຫຼື ຂອງເຈົ້າໜ້າທີ່ສ່ວຍສາອາກອນ ເຊັ່ນ ການເສຍອາກອນຊ້ຳຊ້ອນ, ການເສຍບໍ່ຖືກຕ້ອງຕາມອັດຕາທີ່ໄດ້ກຳນົດໄວ້, ການເສຍເກີນຈຳນວນທີ່ຕ້ອງເສຍ ຊຶ່ງຂະແໜງສ່ວຍສາອາກອນ ຕ້ອງຄົ້ນຄວ້າແກ້ໄຂດ້ວຍຄວາມຮັບຜິດຊອບ ແລະ ສົ່ງຄືນເງິນອາກອນໃຫ້ແກ່ຜູ້ເສຍອາກອນທີ່ດິນ ໃຫ້ຖືກຕ້ອງຕາມກົດໝາຍ ໂດຍນຳໃຊ້ເງິນໃນບ້ວງບັນຊີສຳຮອງສົ່ງຄືນເງິນອາກອນ ຊຶ່ງອີງການຄຸ້ມຄອງວຽກງານສ່ວຍສາອາກອນ ຂັ້ນສູນກາງ ແລະ ຂັ້ນແຂວງຕ້ອງອອກຂໍ້ຕົກລົງ ສົ່ງຄືນເງິນອາກອນທີ່ດິນ ພາຍໃນເວລາ ສິບວັນ ລັດຖະການ.

**ມາດຕາ 19 ການຂໍອາກອນທີ່ດິນຄືນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ເສຍອາກອນທີ່ດິນເກີນ ມີສິດຂໍອາກອນທີ່ດິນຄືນ ໂດຍໃຫ້ຍື່ນໜັງສືສະເໜີ ຕໍ່ຂະແໜງສ່ວຍສາອາກອນ ບ່ອນທີ່ດິນຕັ້ງຢູ່ ຊ້າສຸດບໍ່ໃຫ້ກາຍ ສາມເດືອນ ນັບແຕ່ວັນໄດ້ມອບເງິນອາກອນເປັນຕົ້ນໄປ.

**ມາດຕາ 20 ການພິຈາລະນາຄຳສະເໜີຂໍອາກອນທີ່ດິນຄືນ**

ຂະແໜງສ່ວຍສາອາກອນ ຕ້ອງກວດກາ ແລະ ພິຈາລະນາຄຳສະເໜີຂໍອາກອນທີ່ດິນຄືນ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ແລະ ເອກະສານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ແລ້ວແຈ້ງຜົນການແກ້ໄຂໃຫ້ຜູ້ສະເໜີ ຢ່າງເປັນລາຍລັກອັກສອນ. ໃນກໍລະນີຕ້ອງການຂໍ້ມູນເພີ່ມເຕີມ ຂະແໜງສ່ວຍສາອາກອນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ສະເໜີ ເພື່ອສະໜອງຂໍ້ມູນເພີ່ມເຕີມ ແລ້ວພິຈາລະນາການສົ່ງເງິນອາກອນທີ່ດິນຄືນໃຫ້ສຳເລັດພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຂໍ້ມູນເພີ່ມເຕີມທີ່ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີຄຳສະເໜີ ຫາກບໍ່ໄດ້ຮັບການແກ້ໄຂ ຫຼື ໄດ້ຮັບການແກ້ໄຂ ແຕ່ເຫັນວ່າຍັງບໍ່ຖືກຕ້ອງຕາມກົດໝາຍນັ້ນ ຜູ້ສະເໜີ ມີສິດສະເໜີຕໍ່ຂະແໜງສ່ວຍສາອາກອນຂັ້ນເທິງຖັດໄປ ແລະ ຖ້າຍັງເຫັນວ່າບໍ່ຖືກຕ້ອງ ກໍສາມາດຮ້ອງຟ້ອງຕໍ່ສານປະຊາຊົນ.

## ພາກທີ IV
## ສິດ ແລະ ພັນທະຂອງ ຜູ້ເສຍ, ຜູ້ມອບ ອາກອນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ

**ມາດຕາ 21 ສິດ ແລະ ພັນທະຂອງຜູ້ເສຍອາກອນທີ່ດິນ**

ຜູ້ເສຍອາກອນທີ່ດິນ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບ ຂໍ້ມູນ ຂ່າວສານ, ການຊີ້ແຈງ ແລະ ອະທິບາຍ ກ່ຽວກັບວຽກງານອາກອນທີ່ດິນ;
2. ໄດ້ຮັບນະໂຍບາຍຍົກເວັ້ນອາກອນທີ່ດິນ ຕາມກົດໝາຍ;
3. ສະເໜີຂໍ ແລະ ໄດ້ຮັບເງິນອາກອນທີ່ດິນຄືນ ທີ່ໄດ້ມອບເກີນຕາມກົດໝາຍ;
4. ຮ້ອງຟ້ອງ, ສະເໜີ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ການກະທຳ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
5. ໄດ້ຮັບການຢັ້ງຢືນການມອບເງິນອາກອນທີ່ດິນທຸກຄັ້ງ;
6. ເສຍອາກອນທີ່ດິນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
7. ແຈ້ງຂໍ້ມູນກ່ຽວກັບການຫັນປ່ຽນ ແລະ ການປ່ຽນແປງ ກ່ຽວກັບທີ່ດິນ ຕໍ່ຂະແໜງການທີ່ກ່ຽວຂ້ອງ;
8. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ສິດ ແລະ ພັນທະຂອງຜູ້ມອບອາກອນທີ່ດິນ**

ຜູ້ມອບອາກອນທີ່ດິນ ມີ ສິດ ແລະ ພັນທະ ດັ່ງນີ້:

1. ຊີ້ແຈງ, ອະທິບາຍ ແລະ ມີຄຳເຫັນ ກ່ຽວກັບວຽກງານອາກອນທີ່ດິນ;
2. ຄິດໄລ່, ເກັບ ແລະ ມອບ ອາກອນທີ່ດິນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
3. ໄດ້ຮັບຄ່າຕອບແທນການເກັບອາກອນທີ່ດິນ ຕາມລະບຽບການ;
4. ຮັບຜິດຊອບຕໍ່ການຄິດໄລ່, ເກັບ ແລະ ມອບ ອາກອນທີ່ດິນທີ່ບໍ່ຖືກຕ້ອງ;
5. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກ່ຽວກັບວຽກງານກວດກາອາກອນທີ່ດິນ;
6. ແຈ້ງຂໍ້ມູນ ກ່ຽວກັບການຫັນປ່ຽນ ແລະ ການປ່ຽນແປງ ປະເພດການນຳໃຊ້ທີ່ດິນ ຕໍ່ຂະແໜງການທີ່ກ່ຽວຂ້ອງ;
7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 ສິດ ແລະ ພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສະໜອງຂໍ້ມູນ ຂອງຜູ້ເສຍອາກອນ, ຜູ້ມອບອາກອນ ແລະ ໃຫ້ການຮ່ວມມື ກ່ຽວກັບວຽກງານອາກອນທີ່ດິນ ຕໍ່ຂະແໜງສ່ວຍສາອາກອນ ຕາມພາລະບົດບາດຂອງຕົນ;

2. ແຈ້ງ ແລະ ລາຍງານການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນທີ່ດິນຕໍ່ຂະແໜງສ່ວຍສາອາກອນ ໂດຍໄດ້ຮັບການປົກປ້ອງ ແລະ ຮັກສາຄວາມລັບ ຕາມກົດໝາຍ;

3. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ສິດ ແລະ ໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ

**ມາດຕາ 24 ສິດ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີສິດ ດັ່ງນີ້:

1. ໄດ້ຮັບການຮ່ວມມື ແລະ ອຳນວຍຄວາມສະດວກ ກ່ຽວກັບວຽກງານອາກອນທີ່ດິນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ເມື່ອມີຄວາມຈຳເປັນ ຫຼື ມີການຮ້ອງຂໍຈາກຂະແໜງສ່ວຍສາອາກອນ;

2. ພົວພັນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນ ກ່ຽວກັບວຽກງານອາກອນທີ່ດິນ;

3. ທວງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສະໜອງເອກະສານ, ຂໍ້ມູນ ກ່ຽວກັບວຽກງານອາກອນທີ່ດິນ;

4. ນຳໃຊ້ມາດຕະການ ຕໍ່ຜູ້ບໍ່ປະຕິບັດພັນທະອາກອນທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 25 ໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີໜ້າທີ່ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນທີ່ດິນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ກວ້າງຂວາງ, ເລິກເຊິ່ງ ແລະ ທົ່ວເຖິງ;

2. ປະຕິບັດຕາມ ກົດໝາຍ, ລະບຽບການ ກ່ຽວກັບວຽກງານອາກອນທີ່ດິນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

3. ສະໜອງຂໍ້ມູນ ຂ່າວສານ, ແນະນຳ, ອະທິບາຍ, ຊີ້ແຈງ ແລະ ອຳນວຍຄວາມສະດວກ ກ່ຽວກັບວຽກງານອາກອນທີ່ດິນ ລວມທັງການແຈກຢາຍໃບເກັບເງິນອາກອນທີ່ດິນໃຫ້ ຜູ້ເສຍ ແລະ ຜູ້ມອບ ອາກອນທີ່ດິນ;

4. ຄິດໄລ່, ກວດກາຄືນ ການມອບ, ການຂໍຄືນ, ການສົ່ງຄືນເງິນອາກອນທີ່ດິນ ແລະ ການຍົກເວັ້ນຕາມກົດໝາຍ;

5. ທວງໜີ້ອາກອນທີ່ດິນຄ້າງມອບ ຕາມກົດໝາຍ ແລະ ລະບຽບການ;

6. ຮັກສາຂໍ້ມູນຄວາມລັບຂອງຜູ້ເສຍອາກອນທີ່ດິນ;

7. ຊຸກຍູ້, ຕິດຕາມ ການມອບອາກອນ ແລະ ການຊໍາລະອາກອນທີ່ດິນ ຜ່ານທະນາຄານ, ຄັງເງິນແຫ່ງຊາດ ເພື່ອມອບເຂົ້າງົບປະມານແຫ່ງລັດ;

8. ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບວຽກງານ ອາກອນທີ່ດິນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງຜູ້ເສຍອາກອນ ຕາມຂອບເຂດສິດຂອງຕົນ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ການຈັດຕັ້ງທີ່ຕົນຂຶ້ນກັບ;

11. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ VI
## ຂໍ້ຫ້າມ

### ມາດຕາ 26 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ ຂ່າວສານ ດ້ານອາກອນທີ່ດິນ;

2. ຮ່ວມມືກະທໍາຜິດ, ປົກປິດ ແລະ ຊຸກເຊື່ອງ ຫຼື ປົກປ້ອງ ຜູ້ກະທໍາຜິດ, ກົດໜ່ວງ ຖ່ວງດຶງ ຫຼື ຂັດຂວາງ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ;

3. ໝິ່ນປະໝາດ, ບັງຄັບ ນາບຂູ່, ທໍາຮ້າຍຮ່າງກາຍ ຜູ້ເສຍອາກອນທີ່ດິນ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 27 ຂໍ້ຫ້າມສໍາລັບຜູ້ເສຍອາກອນທີ່ດິນ

ຫ້າມ ຜູ້ເສຍອາກອນທີ່ດິນ ມີພຶດຕິກໍາ ດັ່ງນີ້:

1. ສະໜອງຂໍ້ມູນກ່ຽວກັບທີ່ດິນ ໂດຍບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ;

2. ທໍາລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ເຊື່ອງອໍາຂໍ້ມູນ ຫຼື ການລະເມີດກົດໝາຍ ທີ່ຕິດພັນກັບ ການເສຍອາກອນທີ່ດິນຂອງຕົນ;

3. ເສຍອາກອນທີ່ດິນ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

4. ໃຫ້ສິນບົນ ຫຼື ຄ່າຈ້າງລາງວັນ ແກ່ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນ;

5. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 28 ຂໍ້ຫ້າມສໍາລັບຜູ້ມອບອາກອນທີ່ດິນ

ຫ້າມ ຜູ້ມອບອາກອນທີ່ດິນ ມີພຶດຕິກໍາ ດັ່ງນີ້:

1. ຄິດໄລ່, ເກັບ ແລະ ມອບ ອາກອນທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ທໍາລາຍຂໍ້ມູນ ຫຼັກຖານ, ປອມແປງເອກະສານ, ເຊື່ອງອໍາ ປົດບັງ ລາຍຮັບ ຫຼື ການລະເມີດກົດໝາຍ ທີ່ຕິດພັນກັບການເກັບ ແລະ ການມອບ ອາກອນທີ່ດິນ;

3. ຮັບສິນບົນ ຫຼື ຄ່າຈ້າງລາງວັນ, ສົມຮູ້ຮ່ວມຄິດກັບພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນ ຍັກຍອກເງິນຂອງລັດ;

4. ປອມແປງ ໃບເກັບເງິນ, ໃບຮັບເງິນ ຫຼື ເອກະສານອື່ນ ກ່ຽວກັບອາກອນທີ່ດິນ;

5. ນໍາເອົາເງິນອາກອນທີ່ດິນ ທີ່ເກັບໄດ້ໄປນໍາໃຊ້ ໂດຍບໍ່ມອບເຂົ້າງົບປະມານແຫ່ງລັດ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 29 ຂໍ້ຫ້າມສໍາລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນສ່ວນຕົວ ຂອງຜູ້ເສຍອາກອນທີ່ດິນ;

2. ກົດໜ່ວງຖ່ວງດຶງ, ປອມແປງເອກະສານ, ເລີ່ນເລີ້ໃນການປະຕິບັດໜ້າທີ່, ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

3. ສົມຮູ້ຮ່ວມຄິດ, ໃຫ້ຄໍາແນະນໍາໃນການຫຼີກລ່ຽງ ຫຼື ບໍ່ປະຕິບັດຕາມກົດໝາຍ;

4. ຂໍເອົາ, ທວງເອົາ, ຮັບເອົາສິນບົນ ຫຼື ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ໝູ່ຄູ່ຂອງຕົນ;

5. ບັງຄັບ ນາບຂູ່ ຜູ້ເສຍອາກອນທີ່ດິນ;

6. ເກັບອາກອນທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

7. ນໍາເອົາເງິນອາກອນທີ່ດິນ ທີ່ເກັບໄດ້ໄປນໍາໃຊ້ ໂດຍບໍ່ມອບເຂົ້າງົບປະມານແຫ່ງລັດ;

8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາ ວຽກງານອາກອນທີ່ດິນ
### ໝວດທີ 1
### ການຄຸ້ມຄອງວຽກງານອາກອນທີ່ດິນ

**ມາດຕາ 30 ອົງການຄຸ້ມຄອງວຽກງານອາກອນທີ່ດິນ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານອາກອນທີ່ດິນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານອາກອນທີ່ດິນ ປະກອບດ້ວຍ:

1. ກະຊວງການເງິນ;

2. ກົມສ່ວຍສາອາກອນ;

3. ສ່ວຍສາອາກອນປະຈໍາ ແຂວງ, ນະຄອນຫຼວງ;

4. ສ່ວຍສາອາກອນປະຈໍາ ເມືອງ, ເທດສະບານ, ນະຄອນ;

5. ໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານອາກອນທີ່ດິນ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານອາກອນທີ່ດິນ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານອາກອນທີ່ດິນ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນທີ່ດິນ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານອາກອນທີ່ດິນ ລວມທັງລຶບລ້າງເອກະສານທີ່ອົງການຄຸ້ມຄອງວຽກງານອາກອນທີ່ດິນຂັ້ນລຸ່ມຂອງຕົນ ອອກໂດຍບໍ່ຖືກຕ້ອງ;

5. ຄົ້ນຄວ້າ ອອກລະບຽບການກ່ຽວກັບການແບ່ງປັນຄ່າຕອບແທນການເກັບອາກອນທີ່ດິນ ໃຫ້ແກ່ໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ;

6. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ;

7. ພັດທະນາເຕັກໂນໂລຊີ ເຂົ້າໃນວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເກັບອາກອນທີ່ດິນ;

8. ສ້າງ, ຄຸ້ມຄອງ ແລະ ພັດທະນາ ລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ ໂດຍມີການເກັບກຳ, ບັນທຶກ, ວິເຄາະ, ວິໄຈ, ຄິດໄລ່ ແລະ ແກ້ໄຂຂໍ້ມູນ ພ້ອມທັງເຊື່ອມຕໍ່ລະບົບຖານຂໍ້ມູນທີ່ດິນ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານອາກອນທີ່ດິນ;

10. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບວຽກງານອາກອນທີ່ດິນ;

11. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນທີ່ດິນ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກົມສ່ວຍສາອາກອນ**

ໃນການຄຸ້ມຄອງວຽກງານອາກອນທີ່ດິນ ກົມສ່ວຍສາອາກອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານອາກອນທີ່ດິນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນທີ່ດິນ;

3. ຕິດຕາມ ແລະ ກວດກາ ວຽກງານອາກອນທີ່ດິນ;

4. ຄົ້ນຄວ້າລຶບລ້າງ ເອກະສານທີ່ອົງການຄຸ້ມຄອງວຽກງານອາກອນທີ່ດິນຂັ້ນລຸ່ມຂອງຕົນ ອອກໂດຍບໍ່ຖືກຕ້ອງ;

5. ຄົ້ນຄວ້າ ແລະ ພິຈາລະນາຕົກລົງ ກ່ຽວກັບການສົ່ງຄືນອາກອນທີ່ດິນ ຕາມການສະເໜີຂອງ ຜູ້ເສຍອາກອນ ຫຼື ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ບ່ອນທີ່ດິນຕັ້ງຢູ່;

6. ນຳໃຊ້ເຕັກໂນໂລຊີ ເຂົ້າໃນວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານອາກອນທີ່ດິນ;

7. ຄຸ້ມຄອງ ແລະ ນຳໃຊ້ລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ;

8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານອາກອນທີ່ດິນ;

9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນທີ່ດິນ;

10. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນທີ່ດິນ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ ຕໍ່ກະຊວງການເງິນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານອາກອນທີ່ດິນ ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານອາກອນທີ່ດິນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານອາກອນທີ່ດິນ;

3. ສັງລວມ ສະຖິຕິສຳມະໂນທີ່ດິນ ແລະ ເຂດປະເມີນລາຄາທີ່ດິນ ເພື່ອເປັນພື້ນຖານໃຫ້ແກ່ການເກັບອາກອນທີ່ດິນ;

4. ອອກ ໃບສັ່ງມອບ, ໃບເລັ່ງທວງ, ໃບຄິດໄລ່ ທີ່ຕິດພັນກັບວຽກງານອາກອນທີ່ດິນ ລວມທັງລົບລ້າງເອກະສານທີ່ອີງການຄຸ້ມຄອງວຽກງານອາກອນທີ່ດິນຂັ້ນລຸ່ມຂອງຕົນ ອອກໂດຍບໍ່ຖືກຕ້ອງ;

5. ພິຈາລະນາມອບສິດໃຫ້ໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ;

6. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ ຂອງສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ແລະ ໜ່ວຍງານເສດຖະກິດ-ການເງິນບ້ານ;

7. ຄົ້ນຄວ້າ ແລະ ພິຈາລະນາຕົກລົງ ກ່ຽວກັບການສົ່ງຄືນອາກອນທີ່ດິນ ຕາມການສະເໜີຂອງ ຜູ້ເສຍອາກອນ ຫຼື ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ບ່ອນທີ່ດິນຕັ້ງຢູ່;

8. ນຳໃຊ້ເຕັກໂນໂລຊີ ເຂົ້າໃນວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານອາກອນທີ່ດິນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານອາກອນທີ່ດິນ;

10. ປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການເງິນ, ພະແນກການອື່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນທີ່ດິນ;

11. ພົວພັນ ຮ່ວມມືກັບ ຕ່າງປະເທດ ກ່ຽວກັບວຽກງານອາກອນທີ່ດິນ ຕາມການມອບໝາຍ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ ຕໍ່ກົມສ່ວຍສາອາກອນ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານອາກອນທີ່ດິນ ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານອາກອນທີ່ດິນ;

2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານອາກອນທີ່ດິນ ໃຫ້ໜ່ວຍງານເສດຖະກິດ-ການເງິນບ້ານ, ປະຊາຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

3. ປະສານສົມທົບກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນກ່ຽວກັບ ສຳມະໂນທີ່ດິນ ແລະ ເຂດປະເມີນລາຄາທີ່ດິນ ເພື່ອລາຍງານຕໍ່ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ;

4. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດການເກັບອາກອນທີ່ດິນ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ຜູ້ໄດ້ຮັບມອບສິດໃຫ້ເກັບອາກອນທີ່ດິນ;

5. ສະໜອງຂໍ້ມູນກ່ຽວກັບການບໍ່ເສຍອາກອນທີ່ດິນ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະປີ;

6. ໃຫ້ການ ແນະນຳ, ອະທິບາຍ, ຊີ້ແຈງ ແລະ ອຳນວຍຄວາມສະດວກ ແກ່ຜູ້ເສຍອາກອນ ໃນການເສຍອາກອນທີ່ດິນ;

7. ອອກແຈ້ງການ ຫຼື ແຈ້ງເຕືອນ ກ່ຽວກັບການເສຍອາກອນທີ່ດິນ ເພື່ອໃຫ້ບ້ານແຈ້ງຕໍ່ຜູ້ເສຍອາກອນທີ່ດິນ ແລະ ປະຕິບັດພັນທະການເສຍອາກອນໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;

8. ອອກ ໃບສັ່ງມອບ, ໃບເລັ່ງທວງ, ໃບຄິດໄລ່ ທີ່ຕິດພັນກັບວຽກງານອາກອນທີ່ດິນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານອາກອນທີ່ດິນ;

10. ນຳໃຊ້ເຕັກໂນໂລຊີ ເຂົ້າໃນວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານອາກອນທີ່ດິນ;

11. ຄຸ້ມຄອງ, ນຳໃຊ້ ແລະ ປ້ອນຂໍ້ມູນ ກ່ຽວກັບການເກັບອາກອນທີ່ດິນ ເຂົ້າໃນລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ;

12. ຄົ້ນຄວ້າ ແລະ ສະເໜີສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ພິຈາລະນາກ່ຽວກັບການສົ່ງຄືນເງິນອາກອນທີ່ດິນ;

13. ຄົ້ນຄວ້າ ແລະ ສະເໜີສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ພິຈາລະນາມອບສິດໃຫ້ໜ່ວຍງານເສດຖະກິດ-ການເງິນບ້ານ ຫຼື ນິຕິບຸກຄົນ ໃຫ້ເກັບອາກອນທີ່ດິນ;

14. ສະເໜີຄັງເງິນແຫ່ງຊາດປະຈຳ ເມືອງ, ເທດສະບານ, ນະຄອນ ເບີກຈ່າຍຄ່າຕອບແທນການເກັບອາກອນທີ່ດິນ ໃຫ້ໜ່ວຍງານເສດຖະກິດ-ການເງິນບ້ານ ແລະ ຜູ້ໄດ້ຮັບມອບສິດ ໃຫ້ເກັບອາກອນທີ່ດິນ ຕາມລະບຽບການຂອງກະຊວງການເງິນ;

15. ປະສານສົມທົບກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການການເງິນ, ຫ້ອງການອື່ນ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນທີ່ດິນ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ ຕໍ່ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານອາກອນທີ່ດິນ ໜ່ວຍງານເສດຖະກິດ-ການເງິນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນທີ່ດິນ;

2. ເກັບກໍາ ສະຖິຕິສໍາມະໂນທີ່ດິນ ຫຼື ຕອນດິນ ທີ່ໄດ້ບັນທຶກ ຫຼື ຍັງບໍ່ທັນໄດ້ບັນທຶກເຂົ້າໃນຖານຂໍ້ມູນ, ສະໜອງຂໍ້ມູນກ່ຽວກັບການປຽນເປົ້າໝາຍການນໍາໃຊ້ທີ່ດິນ, ການນໍາໃຊ້ທີ່ດິນຕົວຈິງ ໃຫ້ຂະແໜງສ່ວຍສາອາກອນ ປະຈໍາ ເມືອງ, ເທດສະບານ, ນະຄອນ;

3. ເຜີຍແຜ່, ແນະນໍາ ແລະ ແຈ້ງຂໍ້ມູນ ກ່ຽວກັບການປະເມີນລາຄາທີ່ດິນ, ອັດຕາອາກອນທີ່ດິນ ແລະ ວິທີຄິດໄລ່ ໃຫ້ຜູ້ເສຍອາກອນ ຮັບຮູ້ ແລະ ເຂົ້າໃຈ;

4. ຈັດຕັ້ງການເກັບລາຍຮັບອາກອນທີ່ດິນ ຕາມການມອບໝາຍຂອງສ່ວຍສາອາກອນປະຈໍາ ແຂວງ, ນະຄອນຫຼວງ;

5. ແຈ້ງເຕືອນກ່ຽວກັບການເສຍອາກອນທີ່ດິນ ໃຫ້ແກ່ຜູ້ເສຍອາກອນທີ່ດິນປະຕິບັດ ພ້ອມທັງມາດຕະການທີ່ຈະຖືກນໍາໃຊ້ ໃນກໍລະນີບໍ່ເສຍອາກອນທີ່ດິນປະຈໍາປີ;

6. ມອບເງິນອາກອນທີ່ດິນ ທີ່ຈັດເກັບໄດ້ ເຂົ້າບັນຊີລວມສູນຄັງເງິນແຫ່ງຊາດ ຢູ່ທະນາຄານທຸລະກິດ, ຄັງເງິນແຫ່ງຊາດ ຫຼື ສ່ວຍສາອາກອນປະຈໍາ ເມືອງ, ເທດສະບານ, ນະຄອນ ບ່ອນຕົນຂຶ້ນກັບ;

7. ໄດ້ຮັບຄ່າຕອບແທນການເກັບອາກອນທີ່ດິນ ຕາມລະບຽບການ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານອາກອນທີ່ດິນ ຕໍ່ສ່ວຍສາອາກອນປະຈໍາ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນິຕິກໍາ ແລະ ຄູ່ມື ກ່ຽວກັບວຽກງານປະເມີນລາຄາທີ່ດິນ;

2. ໂຄສະນາ ເຜີຍແຜ່ ນິຕິກໍາ ແລະ ຄູ່ມື ກ່ຽວກັບວຽກງານປະເມີນລາຄາທີ່ດິນ;

3. ຊີ້ນໍາ ການຂຶ້ນທະບຽນອອກໃບຕາດິນ, ສ້າງສໍາມະໂນທີ່ດິນ, ອອກໃບຢັ້ງຢືນການນໍາໃຊ້ທີ່ດິນໃນຂອບເຂດທົ່ວປະເທດ;

4. ຊຸກຍູ້ ອົງການປົກຄອງທ້ອງຖິ່ນ ໃນການດັດປັບເຂດປະເມີນລາຄາທີ່ດິນ;

5. ສະໜອງຂໍ້ມູນ ກ່ຽວກັບ ໃບຕາດິນ, ສໍາມະໂນທີ່ດິນ, ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃຫ້ກະຊວງການເງິນ ເພື່ອເປັນຂໍ້ມູນໃນການເກັບອາກອນທີ່ດິນ ລວມທັງເຊື່ອມຕໍ່ລະບົບຖານຂໍ້ມູນທີ່ດິນ ກັບລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ;

6. ຊີ້ນໍາພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ໃນການກະກຽມ, ເກັບກໍາຂໍ້ມູນ ສ້າງແຜນທີ່ເຂດປະເມີນລາຄາທີ່ດິນ ແລະ ຕາຕະລາງລາຄາປະເມີນທີ່ດິນ ລວມທັງການປະເມີນລາຄາທີ່ດິນໃນແຕ່ລະໄລຍະ ຕາມກົດໝາຍ;

7. ປະສານສົມທົບກັບກະຊວງການເງິນ ກ່ຽວກັບວຽກງານອາກອນທີ່ດິນ;

8. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະເມີນລາຄາທີ່ດິນ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ນໍາພາ, ຊີ້ນໍາ ໃນວຽກງານອາກອນທີ່ດິນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຊຸກຍູ້, ປະສານສົມທົບ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງວຽກງານອາກອນທີ່ດິນ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານອາກອນທີ່ດິນ

**ມາດຕາ 38 ອົງການກວດກາວຽກງານອາກອນທີ່ດິນ**

ອົງການກວດກາວຽກງານອາກອນທີ່ດິນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານອາກອນທີ່ດິນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 30 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 39 ເນື້ອໃນການກວດກາ**

ການກວດກາວຽກງານອາກອນທີ່ດິນ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານອາກອນທີ່ດິນ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຄຸ້ມຄອງວຽກງານອາກອນທີ່ດິນ;
3. ການນໍາໃຊ້ສິດ, ການປະຕິບັດໜ້າທີ່ ແລະ ການນໍາໃຊ້ມາດຕະການຕໍ່ຜູ້ລະເມີດ;
4. ເນື້ອໃນອື່ນທີ່ຈໍາເປັນ.

**ມາດຕາ 40 ການກວດກາທາງດ້ານວິຊາການ**

ການກວດກາທາງດ້ານວິຊາການ ກ່ຽວກັບວຽກງານອາກອນທີ່ດິນ ມີ ດັ່ງນີ້:

1. ແຜນການເກັບພັນທະອາກອນທີ່ດິນ;
2. ການເສຍ ແລະ ການມອບ ອາກອນທີ່ດິນ ຂອງຜູ້ເສຍອາກອນ ແລະ ຜູ້ມອບອາກອນ;
3. ການກວດກາຫຼັງການເສຍອາກອນທີ່ດິນ;
4. ການສົ່ງຄືນ ອາກອນທີ່ດິນ;
5. ສະຖານທີ່, ວັດຖຸປະກອນ ແລະ ເອກະສານ ກ່ຽວກັບການຄິດໄລ່ອາກອນທີ່ດິນ;
6. ການສະຫຼຸບການເກັບ ແລະ ການມອບ ພັນທະອາກອນທີ່ດິນ;